# ທະນາຄານແຫ່ງ ສປປ ລາວ ຈັດຕັ້ງງານ
# ສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ ຄ.ສ 2012 ດ້ວຍບັນຍາກາດມ່ວນຊື່ນ




ໃນຕອນແລງຂອງວັນທີ 29 ທັນວາ 2011 ທີ່ສະຖາບັນການທະນາຄານ, ທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງງານສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ ຄ.ສ 2012 ດ້ວຍບັນຍາກາດເບີກບານມ່ວນຊື່ນ ໂດຍເປັນກຽດເຂົ້າຮ່ວມຂອງທ່ານ ສົມພາວ ໄຟສິດ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ພ້ອມນີ້ກໍມີບັນດາພະນັກງານປະຕິວັດອາວຸໂສຂອງທະນາຄານ, ບັນດາຄະນະກົມ-ທະນາຄານທຸລະກິດ ແລະ ພະນັກງານທຸກທົ່ວໜ້າເຂົ້າຮ່ວມ.

ໃນໂອກາດດັ່ງກ່າວ ກໍໄດ້ຊົມການສະແດງສິລະປະວັນນະຄະດີຈາກນັກສຶກສາສະຖາບັນການທະນາຄານ ທີ່ສ່ອງແສງໃຫ້ເຫັນເຖິງການນຳພາຂອງພັກໃນຂະແໜງການທະນາຄານດ້ວຍຄວາມເບີກບານມ່ວນຊື່ນ, ຈາກນັ້ນທ່ານ ສົມພາວ ໄຟສິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍ ແລະ ໄດ້ຕີລາຄາສູງຕໍ່ການອຸທິດເຫື່ອແຮງ ແລະ ສະຕິປັນຍາຂອງບັນດາພະນັກງານຂັ້ນນຳ-ພະນັກງານຫຼັກແຫຼ່ງ ແລະ ພະນັກງານວິຊາການ ອັນໄດ້ເຮັດໃຫ້ວຽກງານທະນາຄານໃນ

ຮອບໜຶ່ງປີຜ່ານມາໄດ້ຮັບຜົນສຳເລັດອັນໃຫຍ່ຫຼວງ, ປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ.

ຈາກນັ້ນ, ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ອວຍໄຊໃຫ້ພອນແກ່ບັນດາທ່ານຜູ້ນຳພັກ ແລະ ລັດ, ບັນດາພະນັກງານທະນາຄານໃນທົ່ວປະເທດ ຈົ່ງມີອາຍຸໝັ້ນຂັວນຍືນ ເຮັດສຳເລັດທຸກໜ້າທີ່ທີ່ປະເທດຊາດ ແລະ ປະຊາຊົນມອບຫມາຍໃຫ້ ແລະ ພ້ອມດຽວກັນນັ້ນ ເພື່ອສະແດງເຖິງຄວາມຮູ້ບຸນຄຸນອັນໃຫຍ່ຫຼວງຕໍ່ພະນັກງານປະຕິວັດທີ່ອອກພັກຜ່ອນບຳນານ ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ມອບດອກໄມ້ສົດໃຫ້ແກ່ພະນັກງານບຳນານດ້ວຍຄວາມອົບອຸ່ນ ແລະ ໃນເວລາຕໍ່ມາບັນດາພະນັກງານ ແລະ ແຂກທີ່ມີກຽດກໍໄດ້ເຂົ້າຮ່ວມພາເຂົ້າສາມັກຄີ ແລະ ຟ້ອນລຳວົງລາວດ້ວຍບັນຍາກາດແຫ່ງມິດໄມຕີ ແລະ ພ້ອມກັນຫມາຍຫມັ້ນຍາດເອົາຜົນງານໃຫມ່ໃຫຍ່ຫຼວງກ່ວາເກົ່າໃນປີ 2012.